# ພິທີເຊັນສັນຍາ

## ວ່າດ້ວຍການຊໍາລະສະສາງຄ່າສິນຄ້າ ແລະ ບໍລິການຜ່ານ QR Code

## ລະຫວ່າງ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ

## ບໍລິສັດເອັມພອຍມາກການຄ້າ ຈໍາກັດ (mini BigC)

ທີ່ ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2021




ວັນທີ 28 ມັງກອນ 2021, ຢູ່ທີ່ ໂຮງແຮມດອນຈັນພາເລດ ນະຄອນຫຼວງວຽງຈັນ ໄດ້ຈັດພິທີເຊັນສັນຍາ ວ່າດ້ວຍການຊໍາລະສະສາງຄ່າສິນຄ້າ ແລະ ບໍລິການຜ່ານ QR Code ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດເອັມພອຍມາກການຄ້າ ຈໍາກັດ (mini BigC). ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ທ່ານ ພູຂົງ ຈັນທະຈັກ ຜູ້ອໍານວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)** ແລະ **ທ່ານ ນາງ ປະພາວະດີ ກຸອະສານ ປະທານກໍາມະການຜູ້ບໍລິຫານບໍລິສັດເອັມພອຍມາກການຄ້າ ຈໍາກັດ (ມິນິບິກຊີລາວ)** ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະອໍານວຍການ, ຄະນະພະແນກ, ສູນ ແລະ 3 ສາຂາ ຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີເຄືອຄ່າຍການບໍລິການທັງໝົດ 20 ສາຂາ, 94 ໜ່ວຍບໍລິການ, 15 ໜ່ວຍແລກປ່ຽນ ແລະ ຖານລູກຄ້າຜູ້ຊົມໃຊ້ mobile banking ກວມປະມານ 70% ຂອງ ທຸລະກໍາທັງໝົດໃນ ສປປ ລາວ. ທຄຕລ ເປັນທະນາຄານ ທີ່ມີຫລາກຫລາຍການບໍລິການ ເພື່ອອໍານວຍຄວາມສະດວກສະບາຍດ້ານການບໍລິການທະນາຄານ ໃຫ້ແກ່ສັງຄົມ ແລະ ບັນດາຫົວໜ່ວຍທຸລະກິດ. ໃນນັ້ນ, ການບໍລິການຊໍາລະສະສາງຄ່າສິນຄ້າ ແລະ ບໍລິການ ຜ່ານ QR Code ກໍ່ເປັນອີກໜຶ່ງການບໍລິການຂອງ ທຄຕລ ທີ່ຜ່ານມາກໍ່ໄດ້ ໃຫ້ບໍລິການແກ່ຫລາຍພາກສ່ວນ. ການຮ່ວມມືໃນຄັ້ງນີ້, ທຄຕລ ໄດ້ອໍານວຍຄວາມສະດວກໃຫ້ແກ່ລູກຄ້າຂອງທັງສອງຝ່າຍ ໃນການຊໍາລະສະສາງຄ່າສິນຄ້າ ແລະ ບໍລິການ ຜ່ານ QR Code ຢູ່ຮ້ານ mini BigC ທຸກສາຂາ ທົ່ວປະເທດ ລວມທັງໝົດ 51 ສາຂາ ໂດຍຈະສາມາດຮອງຮັບການຊໍາລະໄດ້ ຫຼາຍກວ່າ 100 ເຄົາເຕີ້.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນໍາໃຊ້ຜະລິດຕະພັນ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆເພື່ອອໍານວຍຄວາມສະດວກໃນການຊໍາລະສະສາງຕ່າງໆຂອງລູກຄ້າ ຜ່ານ ທຄຕລ ດ້ວຍເຄື່ອງມືທີ່ທັນສະໄໝ ຫຼື ໃນຍຸກແຫ່ງການບໍລິການທະນາຄານແບບດິຈິຕໍ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la